NAM THEUN 2

# ບໍລິສັດ ໄຟຟ້າ ນ້ຳເທີນ 2 ຈຳກັດ

# ຫຼັກຈັນຍາບັນ

| | | | | | |
|---|---|---|---|---|---|
| 4 | 20 ມິຖຸນາ 2025 | A. YATCO | P.E Seytre<br>M.A Rupp | ສະພາບໍລິຫານ | ດັດປັບຄືນ |
| ສະບັບທີ | ວັນທີ | ຜູ້ຂຽນ | ຜູ້ກວດແກ້ | ຜູ້ອະນຸມັດ | ການດັດແກ້ |

***ລະດັບເອກະສານ:***

| | |
|---|---|
| ຈັດລະດັບການເຂົ້າເຖິງຂອງເອກະສານ ໃນ SharePoint | ເລກທີເອກະສານ |
| **C1-Internal** | **POLCOE** |

ເອກະສານສະບັບນີ້ ເປັນຊັບສິນຂອງ ບໍລິສັດ ໄຟຟ້າ ນ້ຳເທີນ 2 ຈຳກັດ ແລະ ຫ້າມນຳໄປໃຊ້, ຈັດທຳຄືນ, ສົ່ງຕໍ່ ແລະ/ຫຼື ເປີດເຜີຍ ໂດຍບໍ່ໄດ້ຮັບອະນຸຍາດ ລ່ວງໜ້າ.

| ການຄວບຄຸມເອກະສານ | |
|---|---|
| **ເອກະສານຂອງໜ່ວຍງານ/ພະແນກ/ຝ່າຍ:** | ELU-Ethics, Compliance & Legal |
| **ລະດັບການນໍາໃຊ້:** | P0 |
| **ແຈກຢາຍຜ່ານຈົດໝາຍເອເລັກໂຕຣນິກ:** | ພະນັກງານພາຍໃນອົງກອນທັງໝົດ |
| **ການເກັບຮັກສາເອກະສານ:** | N/A |
| **ຮູບແບບທີ່ສະແດງໃນລະບົບ SharePoint: ☒PDF ☐Excel ☐Word ☐Power Point ☐Visio ☐Other………** | |

| ສະບັບທີ | ວັນທີ | ຜູ້ຂຽນ/ຕໍາແໜ່ງ | ຜູ້ກວດແກ້/ ຕໍາແໜ່ງ | ຜູ້ອະນຸມັດ/ ຕໍາແໜ່ງ | ລາຍລະອຽດການ ດັດແກ້ |
|---|---|---|---|---|---|
| **4** | 20 ມິຖຸນາ 2025 | A. Yatco | P.E Seytre/ M.A Rupp | ສະພາບໍລິຫານ | ດັບປັບຄືນ |
| **3** | 8 ກໍລະກົດ 2020 | A. Yatco | ຜູ້ອໍານວຍການ ໃຫຍ່ | ສະພາບໍລິຫານ | ດັບປັບຄືນ |
| **2** | 1 ກໍລະກົດ 2017 | V.Vongkhamsao O.Phommavong | **ຜູ້ບໍລິຫານລະດັບ ອາວຸໂສ** | ສະພາບໍລິຫານ | ດັບປັບຄືນ |
| **1** | 12 ມິຖຸນາ 2014 | S. Duthy P. Dye | **ຜູ້ບໍລິຫານລະດັບ ອາວຸໂສ** | ສະພາບໍລິຫານ | ສະບັບທໍາອິດ |

***ຄໍາແນະນໍາສໍາລັບຜູ້ອະນຸມັດ:*** **ຜູ້ອໍານວຍການ/ຜູ້ຈັດການ ຂອງພະແນກ ຫຼື ຕົວແທນຂອງຕົນ ຈະຕ້ອງອະນຸມັດເອກະສານຄວບຄຸມທັງໝົດທີ່ຢູ່ໃນຄວາມຮັບຜິດຊອບໂດຍກົງ ກ່ອນທີ່ຈະເປີດໃຫ້ເຂົ້າເຖິງ ຫຼື ນໍາໃຊ້ທົ່ວໄປ.**

ເອກະສານທີ່ກ່ຽວຂ້ອງ

| ປະເພດເອກະສານ | ຊື່ເອກະສານ | ເລກທີເອກະສານ |
|---|---|---|
| **ເອກະສານແນະນໍາ** | ນະໂຍບາຍດ້ານຈະລິຍະທໍາ ແລະ ການປະຕິບັດຕາມ | POLECO |
| | ລະບຽບການຕ້ານການໃຫ້ສິນບົນ | PR B07-02 |
| | ນະໂຍບາຍກ່ຽວກັບຄຸນນະພາບ, ສຸຂະພາບ ແລະ ຄວາມປອດໄພ | POLQSE |
| | ກົດລະບຽບພາຍໃນວ່າດ້ວຍການຄຸ້ມຄອງພະນັກງານ | POLPER |
| | ລະບຽບການຈ່າຍເງິນອັດຕາກິນຢູ່ພັກເຊົາ, ການໃຊ້ຂອງຂວັນ ແລະ ການອໍານວຍຄວາມສະດວກໃຫ້ພະນັກງານຂອງລັດ | PR C01-04 |
| | ນະໂຍບາຍຂອງບໍລິສັດກ່ຽວກັບການສື່ສານ ແລະ ການຮັກສາຄວາມລັບ | POLCCC |
| | ລະບຽບການລາຍງານດ້ານຈັນຍາບັນ ແລະ ການປະຕິບັດຕາມ | |
| | ລະບຽບການປະຕິບັດວິໄນຂອງບໍລິສັດ | PR A04-20 |
| | ພັນທະກິດ, ວິໄສທັດ ແລະ ຄ່ານິຍົມຂອງບໍລິສັດໄຟຟ້ານໍ້າເທີນ 2 ຈໍາກັດ | ມະຕິສະພາບໍລິຫານ ທີ່ອະນຸມັດໃນລະຫວ່າງການປະຊຸມຂອງສະພາບໍລິຫານຄັ້ງທີ 61 ວັນທີ 29 ມິຖຸນາ 2017 |

## ເອກະສານເພີ່ມເຕີມ

ເອກະສານສະບັບທີ່ໄດ້ຮັບການຄວບຄຸມທີ່ຖືກບັນທຶກໃນລະບົບ SharePoint ຖືວ່າເປັນສະບັບທາງການ ແລະ ສະບັບສໍາເນົາທີ່ໄດ້ຮັບການພິມອອກມາ ຈະບໍ່ໄດ້ຖືກນໍາມາໃຊ້ ເພື່ອກໍານົດເນື້ອໃນຂອງສະບັບປັດຈຸບັນ ຫຼື ມີຜົນບັງຄັບໃຊ້ທີ່ເໜືອກວ່າບັນດາຂໍ້ຕົກລົງ ຫຼື ເງື່ອນໄຂອື່ນໆທີ່ມີຢູ່ໃນ ຫຼັກຈັນຍາບັນ ທີ່ບໍລິສັດໄດ້ນໍາໃຊ້ຢູ່. ຄໍາແນະນໍານີ້ ຈະມີຜົນທັນທີ ໃນວັນທີທີ່ອະນຸມັດ ແລະ ຈະຍັງສືບຕໍ່ມີຜົນຢູ່ ຈົນກວ່າຈະໄດ້ຮັບການປ່ຽນແປງ ຫຼື ຍົກເລີກ.

# ສາລະບານ


1 ຂອບເຂດການນໍາໃຊ້ ..... 1

2 ຄ່ານິຍົມຫຼັກ: R.I.C.H.E.S.S.E ..... 2

3 ກົດຫຼັກປະພຶດທີ່ຕ້ອງປະຕິບັດ ..... 3

4 ການຈັດຕັ້ງປະຕິບັດ ..... 5



ນີ້ແມ່ນເອກະສານໃນຮູບແບບເອເລັກໂຕຣນິກ ທີ່ໄດ້ຮັບການຄວບຄຸມໂດຍ ບໍລິສັດ ໄຟຟ້າ ນໍ້າເທີນ 2 ຈໍາກັດ ເທົ່ານັ້ນ ແລະ ຖ້າຫາກມີການພິມອອກມາ ແມ່ນຈະນໍາໃຊ້ເພື່ອເປັນຂໍ້ມູນເທົ່ານັ້ນ.

ຫຼັກຈັນຍາບັນນີ້ ("**ຈັນຍາບັນ**") ນໍາໃຊ້ກັບບຸກຄະລາກອນທຸກຄົນຂອງບໍລິສັດ ໄຟຟ້າ ນໍ້າເທີນ 2 ຈໍາກັດ ("**NTPC**"): (1) ມັນເປັນການເນັ້ນຢໍ້າກ່ຽວກັບຄ່ານິຍົມຫຼັກຂອງ NTPC, (2) ຮຽກຮ້ອງໃຫ້ບຸກຄະລາກອນທຸກລະດັບ ປະຕິບັດຕາມຫຼັກຈັນຍາບັນນີ້ໃນທຸກສະຖານະການ, ແລະ (3) ຮວມເອົານະໂຍບາຍດ້ານຈະລິຍະທໍາ ແລະ ການປະຕິບັດຕາມ ("**EC Policy**") ແລະ ລະບຽບການຕ້ານການໃຫ້ສິນບົນ ("**AB Procedure**") ໃນການເຄື່ອນໄຫວວຽກງານປະຈໍາວັນຢູ່ NTPC.

## 1 ຂອບເຂດການນໍາໃຊ້

**ພະນັກງານທຸກຄົນ** – ໃນຖານະພະນັກງານ NTPC, ທ່ານຕ້ອງປະພຶດຕົນຢ່າງມີຈະລິຍະທໍາ ແລະ ປະຕິບັດຕາມ ນະໂຍບາຍດ້ານຈະລິຍະທໍາ ແລະ ການປະຕິບັດຕາມ, ລະບຽບການຕ້ານການໃຫ້ສິນບົນ, ລະບຽບການຕ່າງໆ ຂອງ NTPC ແລະ ລະບຽບກົດໝາຍຂອງ ສ.ປ.ປ.ລາວ. ທ່ານຕ້ອງປະຕິບັດໜ້າທີ່ພາຍໃນບໍລິສັດດ້ວຍຄວາມຍຸຕິທໍາ, ຊື່ສັດ ແລະ ສອດຄ່ອງກັບບັນດາກົດລະບຽບຂອງ NTPC ແລະ ກົດໝາຍຂອງ ສ.ປ.ປ.ລາວ; ທ່ານສາມາດຕິດຕໍ່ຄະນະກໍາມະການຝ່າຍຈະລິຍະທໍາ ໃນກໍລະນີທີ່ທ່ານມີຄໍາຖາມຕ່າງໆ ກ່ຽວກັບຫຼັກຈັນຍາບັນນີ້ ຫຼື ຫາກຕ້ອງການຄໍາອະທິບາຍໂດຍລະອຽດເພີ່ມຕື່ມ ກ່ຽວກັບກົດລະບຽບຕ່າງໆທີ່ກໍານົດໃນຫຼັກຈັນຍາບັນນີ້ ແລະ ຍັງສາມາດລາຍງານການບໍ່ປະຕິບັດຕາມຫຼັກຈັນຍາບັນນີ້ໄດ້ອີກດ້ວຍ.

**ບັນດາຜູ້ບໍລິຫານ ແລະ ຜູ້ຈັດການ** – ໃນຖານະຂອງຜູ້ບໍລິຫານ ຫຼື ຜູ້ຈັດການ, ຈະຖືວ່າເປັນຄວາມຮັບຜິດຊອບຂອງທ່ານ ທີ່ຈະເປັນແບບຢ່າງໃນການປະພຶດດ້ວຍຄວາມຊື່ສັດ ໂດຍຜ່ານສິ່ງທີ່ທ່ານກ່າວ ແລະ ສິ່ງທີ່ທ່ານໄດ້ກະທໍາ, ພ້ອມທັງສ້າງຄວາມຮັບຮູ້ໃນກຸ່ມພະນັກງານ ກ່ຽວກັບຄວາມສໍາຄັນຂອງຄວາມຊື່ສັດສຸຈະລິດໃນການເຮັດວຽກ, ຮັບປະກັນວ່າເພື່ອນຮ່ວມງານຂອງຕົນມີຄວາມຄຸ້ນເຄີຍ ແລະ ເຂົ້າໃຈກົດລະບຽບຕ່າງໆ ທີ່ກໍານົດໄວ້ໃນຫຼັກຈັນຍາບັນນີ້, ຮັບຮອງພຶດຕິກໍາຂອງພະນັກງານຂອງຕົນ ເມື່ອໄດ້ກະທໍາດ້ວຍຄວາມຊື່ສັດ, ສ້າງບັນຍາກາດແຫ່ງຄວາມໄວ້ວາງໃຈທີ່ພະນັກງານທຸກຄົນສາມາດແຈ້ງ ຫຼື ລາຍງານບັນຫາທີ່ກ່ຽວຂ້ອງກັບຈະລິຍະທໍາໄດ້, ລະມັດລະວັງ ເພື່ອປ້ອງກັນ ແລະ ກວດກາການບໍ່ປະຕິບັດຕາມຫຼັກຈັນຍາບັນນີ້.

**ການບໍ່ປະຕິບັດຕາມ** - ການບໍ່ປະຕິບັດຕາມຫຼັກຈັນຍາບັນນີ້ ຈະເຮັດໃຫ້ພະນັກງານຂອງ NTPC ຖືກປະຕິບັດໂທດທາງວິໄນຕາມຂໍ້ກໍານົດທີ່ບັງຄັບໃຊ້ພາຍໃນບໍລິສັດ. ນອກຈາກນີ້, ການລະເມີດເຫຼົ່ານີ້ອາດເຮັດໃຫ້ມີຄວາມຮັບຜິດຊອບ ທາງອາຍາ ແລະ/ຫຼື ທາງແພ່ງ.


ນີ້ແມ່ນເອກະສານໃນຮູບແບບເອເລັກໂຕຣນິກ ທີ່ໄດ້ຮັບການຄວບຄຸມໂດຍ ບໍລິສັດ ໄຟຟ້າ ນໍ້າເທີນ 2 ຈໍາກັດ ເທົ່ານັ້ນ ແລະ ຖ້າຫາກມີການພິມອອກມາ ແມ່ນຈະນໍາໃຊ້ເພື່ອເປັນຂໍ້ມູນເທົ່ານັ້ນ.

## 2 ຄ່ານິຍົມຫຼັກ: R.I.C.H.E.S.S.E

**ຄວາມເຄົາລົບ** – *"ພວກເຮົາປະຕິບັດຕໍ່ກັນ ແລະ ຕໍ່ທຸກຄົນທີ່ເຮົາພົບພໍ້ ດ້ວຍຄວາມເຄົາລົບ ແລະ ໃຈກວ້າງ ໂດຍຄຳນຶງເຖິງຄວາມຫຼາກຫຼາຍ ແລະ ຄຸນຄ່າທີ່ແຕ່ລະຄົນມີ".*

**ຄວາມຊື່ສັດ** – *"ພວກເຮົາເຫັນຄຸນຄ່າຂອງທຸກສິ່ງ ແລະ ທຸກການກະທຳທີ່ ຍຸຕິທຳ, ຊື່ສັດ ແລະ ຖືຫຼັກຄວາມເປັນຈິງ. ພວກເຮົາເຄື່ອນໄຫວວຽກງານເພື່ອຜົນປະໂຫຍດຂອງສ່ວນລວມ, ບໍ່ແມ່ນເພື່ອຜົນປະໂຫຍດສ່ວນຕົວ".*

**ການຮ່ວມມື** – *"ພວກເຮົາເຊື່ອວ່າຄວາມຍິ່ງໃຫຍ່ບໍ່ໄດ້ເກີດຂຶ້ນຈາກຄົນພຽງຄົນດຽວ, ແຕ່ເກີດຂຶ້ນຈາກການເຮັດວຽກຮ່ວມກັນ. ພວກເຮົາເຮັດວຽກຄຽງບ່າຄຽງໄຫຼ່, ຊ່ວຍເຫຼືອ ແລະ ແລກປ່ຽນຄວາມຮູ້ ເຊິ່ງກັນ ແລະ ກັນ ໂດຍການເຊື່ອມເຂົ້າຫາກັນ, ບໍ່ແມ່ນສ້າງກຳແພງກັ້ນ. ບົນພື້ນຖານຄວາມເປັນນ້ຳໜຶ່ງໃຈດຽວກັນຂອງທີມງານ, ພວກເຮົາໃຫ້ຄວາມສຳຄັນກັບການສົນທະນາ ແລະ ການສື່ສານກັນແບບເປີດກວ້າງ".*

**ທ່າແຮງຂອງພະນັກງານ** – *"ພວກເຮົາສ້າງສະພາບແວດລ້ອມການເຮັດວຽກທີ່ສົ່ງເສີມການພັດທະນາສ່ວນບຸກຄົນ ແລະ ວິຊາຊີບຂອງພະນັກງານ. ພ້ອມກັນນັ້ນ, ພວກເຮົາກໍຍັງສ້າງຄວາມເຂັ້ມແຂງໃຫ້ຊຸມຊົນອ້ອມຂ້າງ ໂດຍການສ້າງໂອກາດໃນການພັດທະນາ".*

**ຄວາມເປັນເລີດ** – *"ພວກເຮົາທຸ່ມເທໃຫ້ແກ່ການເຮັດວຽກ ແລະ ມຸ່ງໝັ້ນສູ່ຄວາມເປັນເລີດໃນທຸກວຽກງານທີ່ພວກເຮົາເຮັດ, ໂດຍນຳໃຊ້ແນວທາງການພັດທະນາແບບຕໍ່ເນື່ອງ ເພື່ອສະແຫວງຫາຄວາມສົມບູນແບບຢ່າງບໍ່ຢຸດຢັ້ງ. ພວກເຮົາເປັນບໍລິສັດທີ່ມີປະສິດທິພາບສູງ ເຊິ່ງມີເປົ້າໝາຍເພື່ອສ້າງຄວາມເພິ່ງພໍໃຈສູງສຸດໃຫ້ແກ່ລູກຄ້າ".*

**ຄວາມປອດໄພ** – *"ຄວາມປອດໄພເປັນສິ່ງທີ່ພວກເຮົາໃຫ້ຄວາມສຳຄັນສູງສຸດສຳລັບທຸກຄົນ ນັບຕັ້ງແຕ່ວຽກງານໃຫຍ່ໄປຈົນເຖິງວຽກງານນ້ອຍ ເຊິ່ງລວມທັງ ພະນັກງານ, ຜູ້ຮັບເໝົາ, ຄູ່ຮ່ວມງານ ແລະ ຊຸມຊົນອ້ອມຂ້າງ. ພວກເຮົາປະເມີນຄວາມສ່ຽງທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານຂອງພວກເຮົາຢູ່ສະເໝີ ແລະ ມຸ່ງໝັ້ນທີ່ຈະເປັນບໍລິສັດທີ່ "ປາສະຈາກອຸບັດຕິເຫດ"".*


ນີ້ແມ່ນເອກະສານໃນຮູບແບບເອເລັກໂຕຣນິກ ທີ່ໄດ້ຮັບການຄວບຄຸມໂດຍ ບໍລິສັດ ໄຟຟ້າ ນ້ຳເທີນ 2 ຈຳກັດ ເທົ່ານັ້ນ ແລະ ຖ້າຫາກມີການພິມອອກມາ ແມ່ນຈະນຳໃຊ້ເພື່ອເປັນຂໍ້ມູນເທົ່ານັ້ນ.

**ຄວາມຍືນຍົງ** – “*ພວກເຮົາປະຕິບັດວຽກງານເພື່ອຊ່ວຍໃຫ້ໂລກເຮົາໜ້າຢູ່ຂຶ້ນສຳລັບຄົນຮຸ່ນຫຼັງ - ພວກເຮົາຄຳນຶງເຖິງສ່ວນລວມຢູ່ສະເໝີ ໂດຍການໃຫ້ຄວາມສຳຄັນຕໍ່ຜົນປະໂຫຍດໃນໄລຍະຍາວ ຫຼາຍກວ່າຜົນກຳໄລໃນໄລຍະສັ້ນ. ເພື່ອໃຫ້ສາມາດເຮັດໄດ້ຄືແນວນັ້ນ, ພວກເຮົານຳໃຊ້ຊື່ສຽງ ແລະ ພາບພົດຂອງພວກເຮົາ ໃນການສ້າງແຮງບັນດານໃຈໃຫ້ພາກສ່ວນອື່ນປະຕິບັດໄປໃນລວງດຽວກັນ*”.

**ປະສິດທິພາບ** – “*ພວກເຮົານຳໃຊ້ຊັບພະຍາກອນຂອງພວກເຮົາຢ່າງເໝາະສົມ ເພື່ອຮັບປະກັນໃຫ້ທຸກໂຄງການ ແລະ ທຸກກິດຈະກຳຂອງພວກເຮົາໄດ້ຮັບໝາກຜົນທີ່ດີທີ່ສຸດ ທັງດ້ານຄຸນນະພາບ ແລະ ຜົນກະທົບ*”.

## 3 ກົດຫຼັກປະພຶດທີ່ຕ້ອງປະຕິບັດ

ກົດຫຼັກປະພຶດທີ່ຕ້ອງປະຕິບັດ ກຳນົດໃຫ້ພະນັກງານທຸກຄົນຂອງ NTPC ຕັ້ງແຕ່ລະດັບຕ່ຳສຸດໄປຈົນເຖິງລະດັບສູງສຸດ ຕ້ອງສະແດງຄວາມຊື່ສັດ, ຄວາມເຄົາລົບ, ຄວາມເປັນກາງ, ຄວາມເປັນມືອາຊີບ ແລະ ສຳນຶກໃນຄວາມຮັບຜິດຊອບສ່ວນບຸກຄົນ ໃນການປະຕິບັດໜ້າທີ່ ແລະ ພາລະກິດທີ່ຕົນໄດ້ຮັບມອບໝາຍ.

**(i)** **ການສະກັດກັ້ນການສໍ້ລາດບັງຫຼວງ -** ພວກເຮົາຈະບໍ່ເຂົ້າຮ່ວມ ຫຼື ບໍ່ເຫັນດີເຫັນຊອບກັບການກະທຳທີ່ບໍ່ຊື່ສັດ ຫຼື ສໍ້ໂກງໃດໆ ເພື່ອຜົນປະໂຫຍດສ່ວນຕົວ. ພະນັກງານຈະບໍ່ຖືກລົງໂທດ ຫາກປະຕິບັດຕາມຫຼັກຈັນຍາບັນນີ້ ແລະ ລະບຽບການຕ້ານການໃຫ້ສິນບົນ ແລະ ປະຕິເສດຕໍ່ການສໍ້ລາດບັງຫຼວງທຸກຮູບແບບ ເຖິງວ່າການຕັດສິນໃຈດັ່ງກ່າວ ອາດນຳໄປສູ່ຜົນກະທົບທາງທຸລະກິດ ທີ່ບໍ່ເອື້ອອຳນວຍໃນພາຍຫຼັງກໍຕາມ. ຖ້າມີຂໍ້ສົງໄສ, ກະລຸນາຂໍຄຳປຶກສານຳຄະນະກຳມະການຝ່າຍຈະລິຍະທຳ ຫຼື ພະແນກຈະລິຍະທຳ, ການປະຕິບັດຕາມ ແລະ ກົດໝາຍ (“**ELU**”).

**(ii)** **ການກວດສອບຄວາມຊື່ສັດໃນສາຍພົວພັນທາງທຸລະກິດ** - ເນື່ອງຈາກຊື່ສຽງຂອງ NTPC ແລະ ຜູ້ຖືຮຸ້ນ ອາດໄດ້ຮັບຜົນກະທົບຢ່າງຫຼວງຫຼາຍຈາກຄູ່ຄ້າທີ່ພວກເຮົາເລືອກຈະມີສາຍພົວພັນທາງທຸລະກິດນຳ ຈຶ່ງເປັນສິ່ງສຳຄັນທີ່ພວກເຮົາຈະຕ້ອງເຮັດວຽກຮ່ວມກັບຄູ່ຄ້າທີ່ປະຕິບັດຕາມກົດຂອງຄວາມຊື່ສັດສຸຈະລິດ ແລະ ຄ່ານິຍົມຫຼັກຂອງພວກເຮົາເທົ່ານັ້ນ. ຕ້ອງມີການກວດສອບບັນດາຜູ້ສະໜອງສິນຄ້າ, ຜູ້ໃຫ້ບໍລິການ, ຜູ້ຮັບເໝົາ ແລະ ທຸກພາກສ່ວນພາຍນອກທີ່ NTPC ຈະເຮັດທຸລະກຳນຳ.


ນີ້ແມ່ນເອກະສານໃນຮູບແບບເອເລັກໂຕຣນິກ ທີ່ໄດ້ຮັບການຄວບຄຸມໂດຍ ບໍລິສັດ ໄຟຟ້າ ນ້ຳເທີນ 2 ຈຳກັດ ເທົ່ານັ້ນ ແລະ ຖ້າຫາກມີການພິມອອກມາ ແມ່ນຈະນຳໃຊ້ເພື່ອເປັນຂໍ້ມູນເທົ່ານັ້ນ.

(iii) **ຂອງຂວັນ ແລະ ການຕ້ອນຮັບ -** ກ່ຽວກັບຂອງຂວັນ ແລະ ການຕ້ອນຮັບ, ແມ່ນໃຫ້ປະຕິບັດຕາມຂໍ້ກຳນົດຂອງລະບຽບການກ່ຽວກັບການຈ່າຍອັດຕາກິນຢູ່ພັກເຊົາໃຫ້ພະນັກງານລັດ, ການໃຫ້ຂອງຂວັນ ແລະ ການຕ້ອນຮັບ ແລະ ສະແດງຄວາມບໍລິສຸດໃຈໂດຍການລົງທະບຽນທຸກຄັ້ງທີ່ໄດ້ຮັບ ຫຼື ໃຫ້ຂອງຂວັນ. ປັດຈຸບັນ NTPC ກຳລັງປະຕິບັດ "ນະໂຍບາຍບໍ່ໃຫ້-ຮັບຂອງຂວັນ"; ແຕ່ກໍສາມາດໃຫ້-ຮັບຂອງຂວັນໄດ້ໃນບາງໂອກາດຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບ ເຊິ່ງຕ້ອງຢູ່ໃນຂອບເຂດທີ່ເໝາະສົມ ແລະ ມີມູນຄ່າບໍ່ເກີນ 60 ໂດລາສະຫະລັດ ຫຼື ທຽບເທົ່າ.

(iv) **ການປ້ອງກັນຄວາມຂັດແຍ່ງທາງຜົນປະໂຫຍດ -** ພວກເຮົາຄວນແຈ້ງໃຫ້ຜູ້ຈັດການສາຍງານທຸກຝ່າຍ ໄດ້ຮັບຮູ້ກ່ຽວກັບຄວາມຂັດແຍ່ງທາງຜົນປະໂຫຍດ ທີ່ອາດເກີດມີຂຶ້ນໂດຍໄວທີ່ສຸດ ແລະ ໃນສະຖານະການຂອງຄວາມເປັນມືອາຊີບ, ໃຫ້ຕັດສິນໃຈເພື່ອຜົນປະໂຫຍດໃຫ້ແກ່ NTPC ພຽງຢ່າງດຽວສະເໝີ, ໂດຍບໍ່ຄຳນຶງເຖິງຜົນປະໂຫຍດຂອງຜູ້ອື່ນ ຫຼື ຜົນປະໂຫຍດສ່ວນຕົວຂອງຕົນເອງ.

(v) **ການປົກປ້ອງຂໍ້ມູນທີ່ລະອຽດອ່ອນ -** ຫ້າມນຳໃຊ້ ຫຼື ເປີດເຜີຍຂໍ້ມູນພາຍໃນ ຫຼື ຂໍ້ມູນທາງທຸລະກິດທີ່ລະອຽດອ່ອນ ທີ່ອາດສົ່ງຜົນກະທົບຕໍ່ຊື່ສຽງຂອງ NTPC ຫຼື ສະຖານະຂອງການແຂ່ງຂັນ. ຖ້າມີຂໍ້ສົງໄສ, ກະລຸນາຂໍຄຳປຶກສານຳ ພະແນກຈະລິຍະທຳ, ການປະຕິບັດຕາມ ແລະ ກົດໝາຍ.

(vi) **ຄວາມຮັບຜິດຊອບ -** ພວກເຮົາຮັບຜິດຊອບຕໍ່ການກະທຳ ແລະ ການຕັດສິນໃຈຂອງພວກເຮົາ ແລະ ຖືເອົາຄວາມຮັບຜິດຊອບຂອງຕົນເປັນມາດຕະຖານສູງສຸດ. ຄວາມໂປ່ງໃສເປັນສິ່ງສຳຄັນໃນການປະຕິບັດວຽກງານຂອງພວກເຮົາ ແລະ ໃນທຸກການເຄື່ອນໄຫວວຽກງານ ເພື່ອຮັບປະກັນໃຫ້ພວກເຮົາບັນລຸເປົ້າໝາຍທີ່ວາງໄວ້. ພວກເຮົາຈະເປັນເຈົ້າການໃນທຸກຄວາມສຳເລັດ ແລະ ຂໍ້ຜິດພາດ ແລະ ຈະແກ້ໄຂບັນດາຂໍ້ຜິດພາດ ຫຼື ຂໍ້ບົກພ່ອງ ໂດຍທັນທີ ເພື່ອຮັບປະກັນວຽກງານດຳເນີນໄປຢ່າງໂລ່ງລ່ຽນ.

(vii) **ຄວາມເປັນມືອາຊີບ -** ພວກເຮົາຈະປະຕິບັດໜ້າທີ່ຂອງຕົນດ້ວຍຄວາມຮູ້ຄວາມສາມາດ, ທັກສະ ແລະ ຄວາມເປັນມືອາຊີບໂດຍການພັດທະນາຕົນເອງ ແລະ ວຽກງານ ຢ່າງຕໍ່ເນື່ອງ. ພວກເຮົາຈະມຸ່ງໝັ້ນທີ່ຈະບັນລຸ ແລະ ຮັກສາມາດຕະຖານທາງອຸດສາຫະກຳ ແລະ ແນວທາງການປະຕິບັດທີ່ດີທີ່ສຸດ. ພວກເຮົາຈະຫຼີກເວັ້ນຂໍ້ຂັດແຍ່ງທາງຜົນປະໂຫຍດ ແລະ ຈະບໍ່ເຂົ້າຮ່ວມທຸກກິດຈະກຳທີ່ຈະສົ່ງຜົນກະທົບຕໍ່ຄວາມຊື່ສັດໃນວຽກງານຂອງພວກເຮົາ ແລະ ສາຍພົວພັນເຊິ່ງກັນ ແລະ ກັນ.


ນີ້ແມ່ນເອກະສານໃນຮູບແບບເອເລັກໂຕຣນິກ ທີ່ໄດ້ຮັບການຄວບຄຸມໂດຍ ບໍລິສັດ ໄຟຟ້າ ນ້ຳເທີນ 2 ຈຳກັດ ເທົ່ານັ້ນ ແລະ ຖ້າຫາກມີການພິມອອກມາ ແມ່ນຈະນຳໃຊ້ເພື່ອເປັນຂໍ້ມູນເທົ່ານັ້ນ.

**(viii) ການແຈ້ງເຕືອນກ່ຽວກັບການລະເມີດທີ່ອາດເກີດຂຶ້ນ** - NTPC ແຕ່ງຕັ້ງຄະນະກຳມະການຝ່າຍຈະລິຍະທຳ 3 ທ່ານ ເພື່ອຮັບຟັງການລາຍງານຈາກພະນັກງານ, ຜູ້ຮັບເໝົາ, ລູກຄ້າ, ຜູ້ສະໜອງສິນຄ້າ ຫຼື ຊຸມຊົນ ກ່ຽວກັບສະຖານະການທີ່ອາດຂັດແຍ່ງກັບຫຼັກຈັນຍາບັນນີ້. ຄະນະກຳມະການຝ່າຍຈະລິຍະທຳ ມີໜ້າທີ່ຮັບຜິດຊອບໃນການສົ່ງເສີມຫຼັກຈັນຍາບັນນີ້, ເກັບກຳ ແລະ ປະມວນຜົນຂໍ້ມູນທີ່ກ່ຽວຂ້ອງ ແລະ ແຈ້ງໃຫ້ຜູ້ອຳນວຍການໃຫຍ່ບໍລິສັດ ໄດ້ຮັບຊາບ ຢ່າງຍຸຕິທຳ ແລະ ເປັນຄວາມລັບ ແລະ ປາສະຈາກຄວາມສ່ຽງທີ່ຈະຖືກຕອບໂຕ້ກັບໃນພາຍຫຼັງ. ພະນັກງານສາມາດລາຍງານດ້ວຍວິທີການຕ່າງໆທີ່ກຳນົດໄວ້ໃນລະບຽບການລາຍງານດ້ານຈະລິຍະທຳ ແລະ ການປະຕິບັດຕາມ (“**ECR Procedure**”) ແລະ ສາມາດລາຍງານແບບເປີດເຜີຍຊື່ ຫຼື ບໍ່ເປີດເຜີຍຊື່ຂອງທ່ານ ກໍໄດ້.

**(ix) ມີທັດສະນະຄະຕິໃນການພິຈາລະນາຢ່າງລະອຽດແບບມີລັກສະນະຈະລິຍະທຳ** – ຫາກມີຂໍ້ສົງໄສ, ພວກເຮົາຈະທົບທວນຖາມຕົນເອງວ່າ ການກະທຳນັ້ນແມ່ນຖືກຕ້ອງ, ຍຸຕິທຳ, ຖືກກົດໝາຍ ຫຼື ສອດຄ່ອງກັບຄ່ານິຍົມຫຼັກຂອງພວກເຮົາຫຼືບໍ່. ພວກເຮົາຈະພິຈາລະນາອີກວ່າ ພວກເຮົາຈະຮູ້ສຶກສະບາຍໃຈຫຼືບໍ່ ຖ້າຫາກເພື່ອນຮ່ວມງານ ຫຼື ຄອບຄົວຂອງພວກເຮົາ ຮັບຮູ້ກ່ຽວກັບການກະທຳດັ່ງກ່າວ. ຖ້າຫາກທ່ານຍັງມີຂໍ້ສົງໄສ, ສາມາດສອບຖາມຜູ້ຈັດການໃນສາຍງານຂອງຕົນ ຫຼື ຄະນະກຳມະການຝ່າຍຈະລິຍະທຳ ທີ່ຈະເກັບຮັກສາຄຳຖາມ ຫຼື ຄຳຮ້ອງຂໍຂອງທ່ານໄວ້ ຢ່າງເປັນຄວາມລັບທີ່ສຸດ.

## 4 ການຈັດຕັ້ງປະຕິບັດ

ຈາກປະສົບການຫຼາຍປີທີ່ຜ່ານມາ ແລະ ປຽບທຽບກັບບໍລິສັດອື່ນ, NTPC ຈະຮັບປະກັນໃຫ້ທຸກຄົນເປັນເຈົ້າການຕໍ່ຕົນເອງໃນຫຼັກຈັນຍາບັນນີ້, ໂດຍປະຕິບັດດັ່ງຕໍ່ໄປນີ້:

(i) ພະນັກງານໃໝ່ ຈະໄດ້ຮັບການຝຶກອົບຮົມກ່ຽວກັບຈະລິຍະທຳ ແລະ ການປະຕິບັດຕາມ ໂດຍທັນທີ ເພື່ອໃຫ້ມີຄວາມຄຸ້ນເຄີຍກັບຫຼັກຈັນຍາບັນນີ້, ນະໂຍບາຍດ້ານຈະລິຍະທຳ ແລະ ການປະຕິບັດຕາມ, ລະບຽບການຕ້ານການໃຫ້ສິນບົນ ແລະ ລະບຽບການລາຍງານດ້ານຈະລິຍະທຳ ແລະ ການປະຕິບັດຕາມ.

(ii) ພະນັກງານປັດຈຸບັນ ຈະໄດ້ເຂົ້າຮ່ວມການປະຊຸມ ຫຼື ຝຶກອົບຮົມ ເພື່ອທົບທວນກ່ຽວກັບຈະລິຍະທຳ ແລະ ການປະຕິບັດຕາມ ຢ່າງເປັນປະຈຳ.


ນີ້ແມ່ນເອກະສານໃນຮູບແບບເອເລັກໂຕຣນິກ ທີ່ໄດ້ຮັບການຄວບຄຸມໂດຍ ບໍລິສັດ ໄຟຟ້າ ນ້ຳເທີນ 2 ຈຳກັດ ເທົ່ານັ້ນ ແລະ ຖ້າຫາກມີການພິມອອກມາ ແມ່ນຈະນຳໃຊ້ເພື່ອເປັນຂໍ້ມູນເທົ່ານັ້ນ.

(iii) ໃນຂະບວນການຈັດຊື້-ຈັດຈ້າງ ຈະຕ້ອງຮັບປະກັນວ່າ ຜູ້ຮັບເໝົາທີ່ເຫັນວ່າມີການລະເມີດຫຼັກຈັນຍາບັນນີ້ ຈະບໍ່ສາມາດມີສາຍພົວພັນທາງທຸລະກິດກັບ NTPC ໄດ້.

ຄະນະກຳມະການຈະລິຍະທຳ ທີ່ກຳນົດໄວ້ໃນ **ມາດຕາ 3.viii** (*ການແຈ້ງເຕືອນກ່ຽວກັບການລະເມີດທີ່ອາດເກີດຂຶ້ນ*) ນັ້ນ ຈະຮັບຜິດຊອບການດຳເນີນການຕາມຫຼັກຈັນຍາບັນ, ການຝຶກອົບຮົມ ແລະ ການຮັບຟັງການລາຍງານຕ່າງໆ.

ຫຼັກຈັນຍາບັນນີ້ ຈະໄດ້ຮັບການເສີມສ້າງ, ພັດທະນາ ແລະ ຈັດຕັ້ງປະຕິບັດ ຜ່ານຂັ້ນຕອນພິເສດພາຍໃຕ້ນະໂຍບາຍດ້ານຈະລິຍະທຳ ແລະ ການປະຕິບັດຕາມ. ໂດຍສະເພາະຢ່າງຍິ່ງ, ບັນດາກິດຈະກຳຂອງຄະນະກຳມະການຝ່າຍຈະລິຍະທຳ ແມ່ນຈະໄດ້ຮັບການລາຍງານເຖິງສະພາບໍລິຫານ ໂດຍຜ່ານບົດລາຍງານປະຈຳປີກ່ຽວກັບການປະຕິບັດຕາມລະບຽບກົດໝາຍ.


ນີ້ແມ່ນເອກະສານໃນຮູບແບບເອເລັກໂຕຣນິກ ທີ່ໄດ້ຮັບການຄວບຄຸມໂດຍ ບໍລິສັດ ໄຟຟ້າ ນ້ຳເທີນ 2 ຈຳກັດ ເທົ່ານັ້ນ ແລະ ຖ້າຫາກມີການພິມອອກມາ ແມ່ນຈະນຳໃຊ້ເພື່ອເປັນຂໍ້ມູນເທົ່ານັ້ນ.